บํลิสัด AGL ปะกันไพลาว
Assurances General Laos

# ເອກະສານຄັດຕິດ ສັນຍາປະກັນໄພລົດ
# ຂອງ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ (ຜູ້ປະກັນໄພ)

**ຂອບເຂດການຄຸ້ມກັນຂອງ ສັນຍາ ແມ່ນກຳນົດໄວ້ໃນ ເງື່ອນໄຂທົ່ວໄປ ຂອງ ການປະກັນໄພລົດ.**

## I. ຂອບເຂດການຄຸ້ມກັນ:

### 1. ຄວາມເສຍຫາຍຕໍ່ໂຕລົດປະກັນໄພທີ່ເກີດຈາກ ອຸປະຕິເຫດ "ການຄຸ້ມກັນຕາມຂໍ້ ຄ"

1.1 ຜູ້ປະກັນໄພຄຸ້ມກັນຄວາມເສຍຫາຍ ຂອງ ລົດປະກັນໄພ ລວມເຖິງ ຄວາມເສຍຫາຍຕໍ່ອາໄຫຼ່ຕ່າງໆ ທີ່ເກີດຈາກອຸປະຕິເຫດ ຕາມຄວາມເສຍຫາຍຕົວຈິງທີ່ເກີດຂຶ້ນ ໂດຍຫັກອອກຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ (ຖ້າມີ), ແລະ ອີງຕາມ ຂໍ້ 1.2 ຂ້າງລຸ່ມນີ້, ຜູ້ປະກັນໄພ ຈະຄຸ້ມກັນສູງສຸດຕາມວົງເງິນປະກັນໄພທີ່ໄດ້ກຳນົດໄວ້ໃນສັນຍາ. ຄວາມເສຍຫາຍທີ່ໄດ້ຮັບການຄຸ້ມກັນ ແມ່ນຄວາມເສຍຫາຍດັ່ງຕໍ່ໄປນີ້: ຄວາມເສຍຫາຍທີ່ເກີດຈາກການຕຳ ກັບ ວັດຖຸເຄື່ອນທີ່ ຫຼື ບໍ່ເຄື່ອນທີ່, ການປີ້ນຂວ້າມ, ແກ້ວແອ່ນແຕກ, ໄຟໄໝ້ ແລະ ການລັກ;

1.2 ໃນກໍລະນີທີ່ມີຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ແມ່ນ ໃຫ້ຖືເອົາຕາມທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພທີ່ກຳນົດໄວ້.

| ການຄຸ້ມກັນຄວາມເສຍຫາຍຂອງລົດປະກັນໄພ | ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ |
|---|---|
| ☐ ຂໍ້ ຄ ຄວາມເສຍຫາຍທຸກຢ່າງຈາກອຸປະຕິເຫດ | 1. ບໍ່ເອົາຄວາມຮັບຜິດຊອບ. |
| ☐ ຂໍ້ ງ ຄວາມເສຍຫາຍຈາກການຕຳ | 2. ເອົາຄວາມຮັບຜິດຊອບ 10% ຂອງມູນຄ່າເສຍຫາຍ ຕ່ຳສຸດ 600,000 ກີບ; ສູງສຸດ 1,500,000 ກີບ. |
| ☐ ຂໍ້ ຈສຊ ຄວາມເສຍຫາຍຈາກແກ້ວແອ່ນແຕກ, ໄຟໄໝ້ ແລະ ***ການລັກ, ການຄຸ້ມກັນຕ້ອງໄດ້ເອົາຄວາມຮັບຜິດຊອບ | 3. ເອົາຄວາມຮັບຜິດຊອບ 5% ຂອງມູນຄ່າຄຸ້ມກັນ. |
| ການຄຸ້ມກັນຄວາມເສຍຫາຍຂອງລົດປະກັນໄພ ຂໍ້ ຄ ແລະ ງ ໄດ້ຂະຫຍາຍການຄຸ້ມກັນຄວາມເສຍຫາຍຈາກການຕຳໄປຍັງປະເທດໄທ ຊຶ່ງມີໄລຍະເວລາສູງສຸດ 15 ວັນ ຕໍ່ການເດີນທາງ 1 ຄັ້ງ. | |

**** ການລັກແມ່ນເຫດການ ຫຼື ການກະທຳ ທີ່ຜິດກົດໝາຍດ້ວຍການເອົາຊັບສິນຂອງຄົນອື່ນມາເປັນຂອງຕົນເອງໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຍິນຍອມດ້ວຍຄວາມສະໝັກໃຈ ຈາກເຈົ້າຂອງຊັບ (ທີ່ຖືກຕ້ອງຕາມກົດໝາຍ) ແລະ ມີການໃຊ້ກຳລັງ ຫຼື ຄວາມຮຸນແຮງ.*

### 2. ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ການຄຸ້ມກັນໃນຂໍ້ "ກ ແລະ ຂ":

ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ຈະຄຸ້ມກັນ ຄວາມເສຍຫາຍ ຕໍ່ ບຸກຄົນອື່ນ ເຊິ່ງລວມເຖິງ ຜູ້ໂດຍສານ ຂອງ ລົດປະກັນໄພ ຍົກເວັ້ນ ຜູ້ຂັບຂີ່ ແລະ ຊັບສິນ ຂອງ ຜູ້ໄດ້ຮັບການປະກັນໄພ. ຂອບເຂດການຄຸ້ມກັນແມ່ນຂຶ້ນກັບ ວົງເງິນປະກັນໄພ ທີ່ໄດ້ກຳນົດໄວ້ໃນ ສັນຍາປະກັນໄພ ເຊິ່ງເປັນຄວາມຮັບຜິດຊອບສູງສຸດທີ່ ຜູ້ປະກັນໄພສາມາດໃຫ້ການຄຸ້ມກັນ. ການຄຸ້ມກັນແມ່ນປະຕິບັດດັ່ງລຸ່ມນີ້:

2.1 ການທົດແທນຄວາມເສຍຫາຍ ຕາມ ຄວາມຮັບຜິດຊອບ ຂອງ ຜູ້ໄດ້ຮັບການປະກັນໄພ. ການຈ່າຍສິນທົດແທນປະກັນໄພ ສຳລັບຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ຄວາມເສຍຫາຍຕໍ່ຊັບສິນ ຈະຂຶ້ນກັບອັດຕາສ່ວນ ຂອງ ຄວາມຮັບຜິດຊອບ ແຕ່ບໍ່ເກີນວົງເງິນປະກັນໄພ. ກ່ຽວກັບກໍລະນີພິການຖາວອນບາງສ່ວນ, ຜູ້ປະກັນໄພ ຈະຄິດໄລ່ສິນທົດແທນປະກັນໄພ ຕາມອັດຕາສ່ວນ ຂອງການພິການ ທຽບໃສ່ການພິການຖາວອນທັງໝົດ.

2.2 ການຈ່າຍສິນທົດແທນປະກັນໄພ ພາຍໃຕ້ ຫຼັກການຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ, ຈຳກັດສະເພາະຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ໃນກໍລະນີທີ່ຍັງບໍ່ທັນຮູ້ວ່າໃຜເປັນຜູ້ຮັບຜິດຊອບຄວາມເສຍຫາຍ, ຜູ້ປະກັນໄພຈະຈ່າຍທົດແທນກ່ອນຕາມລະບຽບກົດໝາຍ ສູງສຸດ ຈຳນວນ 10,000,000 ກີບ ຕໍ່ ອຸປະຕິເຫດ 1 ຄັ້ງ ເຊິ່ງໃນນັ້ນ ຕໍ່ຜູ້ເຄາະຮ້າຍ 1 ຄົນ ກໍລະນີເສຍຊີວິດ ຫຼື ພິການຖາວອນທັງໝົດແມ່ນ 3,000,000 ກີບ ແລະ ສຳລັບຄ່າໃຊ້ຈ່າຍໃນການປິ່ນປົວຕາມຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນ 1,800,000 ກີບ. ສຳລັບການພິການຖາວອນບາງສ່ວນ ແມ່ນຈະປະຕິບັດຕາມ ຂໍ້ 2.1 ຂ້າງເທິງນີ້.

| ລາຍລະອຽດການຄຸ້ມກັນ / ທາງເລືອກ | ວົງເງິນປະກັນໄພ (ກີບ) | | | | | |
|---|---|---|---|---|---|---|
| | ☐ ກຂ1 | ☐ ກຂ2 | ☐ *ກຂ2+ | ☐ ກຂ3 | ☐ ກຂ4 | ☐ ກຂ5 |
| 1. ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ກຂ | | | | | | |
| 1.1 ***ຄວາມເສຍຫາຍທາງດ້ານຮ່າງກາຍ: | | | | | | |
| 1.1.1 ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 30,000,000 | 35,000,000 | 35 ລ້ານ ຫາ 50 ລ້ານ | 50,000,000 | 75,000,000 | 100,000,000 |
| 1.1.2 ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 4,000,000 | 4,500,000 | 5,000,000 | 5,000,000 | 7,500,000 | 10,000,000 |
| (ໃນນັ້ນຄ່ານອນໂຮງໝໍ ສູງສຸດຕໍ່ຄົນ) | 600,000 | 650,000 | 650,000 | 700,000 | 750,000 | 1,500,000 |
| ***ຄວາມເສຍຫາຍທາງດ້ານຮ່າງກາຍ, ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ | 300,000,000 | 500,000,000 | 750,000,000 | 750,000,000 | 1,000,000,000 | 1,000,000,000 |
| 1.2 ຄວາມເສຍຫາຍທາງດ້ານວັດຖຸ, ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ | 21,000,000 | 50,000,000 | 50,000,000 | 50,000,000 | 75,000,000 | 100,000,000 |

** ທາງເລືອກ ກຂ2+ ແມ່ນໃຊ້ກັບການຄຸ້ມກັນຂໍ້ ຄ ຫຼື ງ ເທົ່ານັ້ນ ຊຶ່ງນຳໃຊ້ຄ່າທຳນຽມ ແລະ ເງື່ອນໄຂການຄຸ້ມກັນຄືກັບທາງເລືອກ ກຂ2*

*** ຄວາມຮັບຜິດຊອບທີ່ບໍ່ຖືຄວາມຜິດແມ່ນນຳໃຊ້ໄດ້ກັບທຸກໆທາງເລືອກຂອງການຄຸ້ມກັນ ຂໍ້ ກ ແລະ ຂ.*

### 3. ການຄຸ້ມກັນຜູ້ຂັບຂີ່ "ການຄຸ້ມກັນຂໍ້ ດ":

ຜູ້ປະກັນໄພ ຄຸ້ມກັນບຸກຄົນທີ່ຂັບຂີ່ ລົດທີ່ໄດ້ຮັບການປະກັນໄພ ເຊິ່ງຜູ້ກ່ຽວໄດ້ຮັບອະນຸຍາດ ຈາກ ຜູ້ໄດ້ຮັບການປະກັນໄພ ເຊິ່ງເປັນບຸກຄົນທີ່ຈະບໍ່ ໄດ້ຮັບສິນທົດແທນປະກັນໄພ ຈາກ ການປະກັນໄພອື່ນໃດໜຶ່ງ ຫຼື ມີສິດໄດ້ຮັບແຕ່ວົງເງິນປະກັນໄພບໍ່ພຽງພໍ. ຜູ້ປະກັນໄພຈະຈ່າຍ ເງິນສິນທົດແທນປະກັນໄພ ສຳລັບ ສ່ວນທີ່ເກີນວົງເງິນຄຸ້ມຄອງເທົ່ານັ້ນ ແລະ ສູງສຸດເຖິງວົງເງິນຄຸ້ມກັນ ພາຍໃຕ້ ສັນຍາປະກັນໄພ.

**ມູນຄ່າຄຸ້ມກັນຄິດໄລ່ເປັນເງິນກີບ**

| ປະເພດລົດ | ລາຍລະອຽດຂອງການຄຸ້ມກັນ | ☐ ດ00 | ☐ ດ1 | ☐ ດ2 | ☐ ດ2+ | ☐ ດ3 | ☐ ດ4 | ☐ ດ5 |
|---|---|---|---|---|---|---|---|---|
| ລົດ 4 ລໍ້ ຂຶ້ນໄປ | ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 15,000,000 | 30,000,000 | 35,000,000 | 35,000,000 | 50,000,000 | 75,000,000 | 100,000,000 |
| | ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 3,000,000 | 4,000,000 | 4,500,000 | 5,000,000 | 5,000,000 | 7,500,000 | 10,000,000 |
| ລົດ 2 ລໍ້ ແລະ 3 ລໍ້ (ລົດຈັກ ແລະ ລົດຕຸກໆ) | ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 7,500,000 | 15,000,000 | 17,500,000 | 17,500,000 | 25,000,000 | 37,500,000 | 50,000,000 |
| | ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 1,500,000 | 2,000,000 | 2,250,000 | 2,500,000 | 2,500,000 | 3,750,000 | 5,000,000 |

***** ທາງເລືອກ ດ2+ ແມ່ນໃຊ້ກັບການຄຸ້ມກັນຂໍ້ ຄ ຫຼື ງ ເທົ່ານັ້ນ ຊຶ່ງນຳໃຊ້ຄ່າທຳນຽມ ແລະ ເງື່ອນໄຂການຄຸ້ມກັນຂອງທາງເລືອກ ດ2*

4. **ການປົກປ້ອງສິດ ແລະ ຮຽກຮ້ອງທົດແທນຄືນ "ການຄຸ້ມກັນ ຂໍ້ ຍ"ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ, 150,000 ກີບ**

ພາຍໃນ ຂອບເຂດວົງເງິນປະກັນໄພສູງສຸດ ສໍາລັບ ຄວາມເສຍຫາຍແຕ່ລະຢ່າງ ຕາມທີ່ໄດ້ກໍານົດໄວ້ໃນ ເງື່ອນໄຂຂອງສັນຍາປະກັນໄພ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຖືກຮ້ອງຟ້ອງ ໂດຍ ບຸກຄົນທີສາມ ເພື່ອຮຽກຮ້ອງໃຫ້ໃຊ້ແທນຄວາມເສຍຫາຍ ແລະ/ຫຼື ຄວາມສູນເສຍໃດໜຶ່ງ ອັນເປັນຜົນມາຈາກ ອຸປະຕິເຫດ, ຜູ້ປະກັນໄພ ຈະປົກປ້ອງສິດ ແລະ/ຫຼື ຜົນປະໂຫຍດ ຂອງ ຜູ້ໄດ້ຮັບການປະກັນໄພ. ໃນທາງກົງກັນຂ້າມ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຮ້ອງຟ້ອງ ບຸກຄົນທີສາມ ເພື່ອຮຽກຮ້ອງເອົາຄ່າເສຍຫາຍ ແລະ/ຫຼື ຄ່າສູນເສຍທີ່ເກີດຈາກອຸປະຕິເຫດ,

**ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ປະກັນໄພ :**

- ໃຫ້ຄໍາແນະນໍາທາງດ້ານເຕັກນິກ,
- ຊ່ວຍໃນການກະກຽມເອກະສານຕ່າງໆ,
- ຊ່ວຍຕິດຕາມຄະດີ ສໍາລັບ ຜູ້ໄດ້ຮັບການປະກັນໄພ ເທົ່ານັ້ນ.

**ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ໄດ້ຮັບການປະກັນໄພ:**

- ສະໜອງຂໍ້ມູນ ແກ່ ເຈົ້າໜ້າທີ່ຕໍາຫຼວດ ດ້ວຍຕົນເອງ;
- ສະໜອງຂໍ້ມູນຫຼັກຖານ ແກ່ ຕໍາຫຼວດ / ສານ,
- ໃຫ້ຄໍາໃຫ້ການ ຫຼື ຄໍາໂຕ້ແຍ້ງ,
- ເຂົ້າຮ່ວມການປະຊຸມ ຕາມການສະເໜີ,
- ເຂົ້າຮ່ວມຟັງຄໍາຕັດສິນ ແລະ ອື່ນໆ...

II. **ການກວດກາສະພາບລົດ:**

ສໍາລັບ ການຄຸ້ມກັນຄວາມເສຍຫາຍຂອງລົດປະກັນໄພ ຈະຕ້ອງມີການກວດກາສະພາບລົດ ກ່ອນເຮັດສັນຍາປະກັນໄພ ລວມທັງໃນເວລາທີ່ມີການປ່ຽນແປງ ຫຼື ປັບປຸງສະພາບລົດ ກໍ່ຕ້ອງໄດ້ມີການກວດສະພາບລົດກ່ອນ. ໃນກໍລະນີ ບໍ່ໄດ້ຮັບການກວດສະພາບລົດ, ຜູ້ປະກັນໄພ ຈະຄຸ້ມກັນລົດປະກັນໄພດັ່ງກ່າວພຽງແຕ່ອຸປະຕິເຫດຈາກການຕໍາກັບພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ຄັນອື່ນເທົ່ານັ້ນ. ຖ້າຫາກມີການກວດກາສະພາບລົດຢ່າງຄົບຖ້ວນແລ້ວ ຜູ້ປະກັນໄພ ຈະຄຸ້ມກັນລົດປະກັນໄພດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ.

**ກໍລະນີຍົກເລີກສັນຍາ**, ຕ້ອງສົ່ງຄືນໃບຢັ້ງຢືນ ແລະ ສັນຍາປະກັນໄພລົດ, ຄ່າທໍານຽມປະກັນໄພທີ່ຈະສົ່ງຄືນດັ່ງນີ້ (ສະເພາະສັນຍາທີ່ບໍ່ເກີດອຸປະຕິເຫດເທົ່ານັ້ນ):

| ຈໍານວນມື້ທີ່ໃຊ້ແລ້ວ | ≤ 30 | 31-60 | 61-90 | 91-120 | 121-150 | 151-180 | 181-210 | 211-240 | 241-270 | 271-300 | 301-330 | 331-365 |
|---|---|---|---|---|---|---|---|---|---|---|---|---|
| % ທຽບໃສ່ຄ່າທໍານຽມປີ | 72 | 66 | 60 | 52 | 44 | 32 | 27 | 22 | 15 | 12 | 5 | 0 |

III. **ຂໍ້ຍົກເວັ້ນການຄຸ້ມກັນ:**

1. ຄວາມເສຍຫາຍທີ່ເກີດ ຈາກ ຜູ້ໄດ້ຮັບການປະກັນໄພ ໂດຍເຈດຕະນາ ເປັນຕົ້ນແມ່ນ ອຸປະຕິເຫດ ຫຼື ຄວາມເສຍຫາຍທີ່ ຜູ້ໄດ້ຮັບຜົນປະໂຫຍດ, ຜູ້ຂັບຂີ່ພາຫະນະ, ຜູ້ໂດຍສານ ຫຼື ບຸກຄົນທີສາມ ກໍ່ຂຶ້ນໂດຍເຈດຕະນາ ເພື່ອຈຸດປະສົງໃນການທໍາຮ້າຍຮ່າງກາຍຕົນເອງ, ຂ້າຕົວຕາຍ, ພະຍາຍາມຂ້າຕົວຕາຍ; ຫຼື ອາການປ່ວຍທາງຈິດ, ອຸປະຕິເຫດ, ຄວາມສູນເສຍ ຫຼື ຄວາມເສຍຫາຍອື່ນໆ ທີ່ສ້າງຂຶ້ນໂດຍເຈດຕະນາ ໂດຍ ຜູ້ໄດ້ຮັບການປະກັນໄພ, ຜູ້ຂັບຂີ່ພາຫະນະ ຫຼື ບຸກຄົນອື່ນ ທີ່ດໍາເນີນການໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ໂດຍມີການມອບໝາຍຢ່າງຈະແຈ້ງ ຫຼື ເປັນໄນໆ...
2. ຄວາມເສຍຫາຍທີ່ເກີດຈາກຜູ້ຂັບຂີ່ ທີ່ບໍ່ມີໃບຂັບຂີ່ຖືກຕ້ອງຕາມປະເພດລົດ ຫຼື ໃນຂະນະມຶນເມົາ, ບໍ່ວ່າຈະເກີດຈາກລົດຢາເສບຕິດ, ສານເຄມີທີ່ມີລິດຕໍ່ປະສາດ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທຽບເທົ່າ ຫຼື ເກີນກວ່າ 0.24mg/l ໃນລົມຫາຍໃຈ ຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ.
3. ຄວາມເສຍຫາຍ ຕໍ່ ພາຫະນະທີ່ມີປະກັນໄພ ຫຼື ບຸກຄົນທີສາມ ເຊິ່ງເກີດຈາກ ອຸປະຕິເຫດ ຈາກ ການນໍາໃຊ້ ພາຫະນະທີ່ມີປະກັນໄພ ເຂົ້າໃນການຂົນສົ່ງວັດຖຸອັນຕະລາຍ (ວັດຖຸໄວໄຟ, ລະເບີດ, ນໍ້າມັນເຊື້ອໄຟທີ່ເປັນກົດ ແລະ ອື່ນໆ); ແລະ ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີສາມໄດ້ຮັບບາດເຈັບ ຈາກ ວັດຖຸອັນຕະລາຍດັ່ງກ່າວ. (ເຖິງຢ່າງໃດກໍ່ຕາມ ການຂົນສົ່ງນໍ້າມັນແຮ່ ຫຼື ຜະລິດຕະພັນຄ້າຍຄືກັນ ບໍ່ເກີນ 500 ກິໂລກຣາມ ຫຼື 600 ລິດ ລວມເຖິງ ການຂົນສົ່ງນໍ້າມັນເຊື້ອໄຟ ສໍາລັບ ໃຊ້ກັບເຄື່ອງຈັກ ແມ່ນບໍ່ລວມໃນຂໍ້ຍົກເວັ້ນນີ້).
4. ຄວາມເສຍຫາຍທຸກຮູບແບບ ທີ່ເກີດຂຶ້ນຕໍ່ ພາຫະນະ ໃນເວລາທີ່ມີການເຄື່ອນຍ້າຍໂດຍ ເຈົ້າໜ້າທີ່ຕໍາຫຼວດ ຫຼື ທະຫານ.
5. ຄວາມເສຍຫາຍທີ່ເກີດ ຈາກ ໄຟໄໝ້ ອັນເປັນຜົນມາຈາກ ການຂີ້ລັກງັດແງະ ໂດຍບຸກຄົນໃດໜຶ່ງ ທີ່ໄດ້ຮັບມອບ ໝາຍໃຫ້ ນໍາໃຊ້ ຫຼື ຄອບຄອງ ພາຫະນະຕາມ ສັນຍາເຊົ່າ, ສັນຍາເຊົ່າສິນເຊື່ອ , ສັນຍາເຊົ່າຊື້, ສັນຍາຊວດຈໍາ; ຫຼື ໂດຍບຸກຄົນທີ່ລົງນາມໃນສັນຍາດັ່ງກ່າວ.
6. ຄວາມເສຍຫາຍທີ່ເກີດ ຕໍ່ ພາຫະນະ ອັນເປັນຜົນມາຈາກ ສິນຄ້າ ແລະ ວັດຖຸສິ່ງຂອງທີ່ບັນຈຸຢູ່ໃນລົດ.
7. ຄວາມເສຍຫາຍທີ່ເກີດ ຈາກ ການຂົນສິນຄ້າຂຶ້ນ ຫຼື ລົງ ຈາກພາຫະນະ.
8. ຄວາມເສຍຫາຍທີ່ເກີດຂຶ້ນໃນ ລະຫວ່າງ ການເຂົ້າຮ່ວມການແຂ່ງຂັນກິລາ (ຫຼື ການຝຶກຊ້ອມ) ຕາມ ການຮັບຮອງ ຂອງ ລັດຖະບານ ຕາມທີ່ໄດ້ກໍານົດໄວ້ໃນ ກົດລະບຽບທີ່ມີຜົນບັງຄັບໃຊ້, ເມື່ອ ຜູ້ໄດ້ຮັບການປະກັນໄພ ເຂົ້າຮ່ວມໃນການ ແຂ່ງຂັນກິລາ ດ້ວຍຕົວເອງ ໃນຖານະເປັນຄູ່ແຂ່ງ, ຜູ້ຈັດງານ ຫຼື ຜູ້ຕາງໜ້າ ຂອງ ພາກສ່ວນທີ່ກ່າວມານັ້ນ.
9. ຄວາມເສຍຫາຍທີ່ເກີດຈາກ ໄພພິບັດທາງທໍາມະຊາດ ເຊັ່ນ: ແຜ່ນດິນໄຫວ, ພາຍຸ, ນໍ້າຖ້ວມ, ອັກຄີໄພ ຫຼື ການລະເບີດ.
10. ໃນກໍລະນີໄຟໄໝ້, ຄວາມເສຍຫາຍທີ່ເກີດຈາກການດັດແປງລົດ ຈະບໍ່ໄດ້ຮັບການຄຸ້ມກັນ, ໃນກໍລະນີລົດໄຟຟ້າ, ສັນຍາປະກັນໄພຈະບໍ່ຄຸ້ມກັນຄວາມເສຍຫາຍໃດໆຕໍ່ແບັດເຕີລີ້ໄຟຟ້າຫຼືໂຕລົດ ເນື່ອງຈາກການສາກແບັດເຕີລີ້ໄຟຟ້າ ໂດຍໃຊ້ເຄື່ອງສາກອື່ນທີ່ບໍ່ຖືກຕ້ອງໄດ້ມາດຕະຖານ.
11. ຄວາມເສຍຫາຍທາງອ້ອມ ເຊັ່ນວ່າ: ການເສຍສິດນໍາໃຊ້, ການບໍ່ໄດ້ຮັບຜົນປະໂຫຍດ ແລະ ການເສື່ອມສະພາບຂອງພາຫະນະ.
12. ຄວາມເສຍຫາຍຈາກການນໍາໃຊ້ຢ່າງເປັນປົກກະຕິ ຫຼື ເສື່ອມສະພາບຈາກການໃຊ້ງານ ຈະບໍ່ໄດ້ຮັບການຄຸ້ມກັນ.
13. ຄວາມເສຍຫາຍ ທີ່ອາດຈະເກີດ ຈາກ ຄວາມບົກຜ່ອງໃນການບໍາລຸງຮັກສາ, ເຂົ້າໜ້ຽງ ແລະ ການກັດກ່ອນ ຫຼື ພາຫະນະ ເສື່ອມສະພາບ, ບໍ່ສົມບູນ ຫຼື ມີຂໍ້ບົກຜ່ອງ ໃນຂັ້ນຕອນການຜະລິດລົດ ເຊັ່ນ: ສະພາບພື້ນດິນບໍ່ລຽບ ຫຼື ບໍ່ດີ ເຊິ່ງສົ່ງຜົນກະທົບ ຕໍ່ ການຂັບເຄື່ອນ ຂອງ ລົດຍົນ, ອາໄຫຼ່ບໍ່ເຮັດວຽກ, ຄວາມເສຍຫາຍຈາກການນໍາໃຊ້ເປັນເວລາດົນນານ ທີ່ເຮັດໃຫ້ ລົດເສື່ອມໂຊມລົງ, ມີຄວາມສູນເສຍ ຫຼື ເສຍຫາຍ ຈາກ ການນໍາໃຊ້ປົກກະຕິ ໂດຍ ຜູ້ໄດ້ຮັບການປະກັນໄພ, ໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນໃດໜຶ່ງ.
14. **ຢາງລົດ & ຂອບຢາງລົດ**: ຄວາມເສຍຫາຍ ຈາກການນໍາໃຊ້ (ທີ່ບໍ່ແມ່ນອຸປະຕິເຫດ) ຈະບໍ່ໄດ້ຮັບການຄຸ້ມກັນ. ເຖິງຢ່າງໃດກໍ່ຕາມ, ສໍາລັບຄວາມເສຍຫາຍທີ່ເກີດຈາກ ອຸປະຕິເຫດ, ບໍລິສັດ ຈະຄຸ້ມກັນ ໂດຍພາຍໃຕ້ເງື່ອນໄຂຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ (ຖ້າມີ) ຕາມສັນຍາປະກັນໄພຕົວຈິງ,
15. **ຮອຍຂູດ**: ຄວາມເສຍຫາຍຈາກ ການນໍາໃຊ້ເປັນປົກກະຕິ (ທີ່ບໍ່ແມ່ນອຸປະຕິເຫດ) ຈະບໍ່ໄດ້ຮັບການຄຸ້ມກັນ ພາຍໃຕ້ ເງື່ອນໄຂທົ່ວໄປ; ເຖິງຢ່າງໃດກໍ່ຕາມ, ສໍາລັບຄວາມເສຍຫາຍທີ່ເກີດຂຶ້ນ ຈາກ ອຸປະຕິເຫດ, ບໍລິສັດ ຈະຄຸ້ມກັນ ໂດຍພາຍໃຕ້ເງື່ອນໄຂຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ (ຖ້າມີ) ຕາມສັນຍາປະກັນໄພຕົວຈິງ, ຄວາມເສຍຫາຍທີ່ເກີດຈາກການນໍາໃຊ້ເປັນປົກກະຕິ (ທີ່ບໍ່ແມ່ນອຸປະຕິເຫດ) ທີ່ບໍ່ໄດ້ຮັບການຄຸ້ມກັນ ເປັນຕົ້ນມີດັ່ງຕໍ່ໄປນີ້:
    - 15.1 ຮອຍຂູດ ຕາມຄັນຈັບ ຫຼື ໂຄງປະຕູລົດ, ຄວາມເສຍຫາຍ ຢູ່ ຖານຢຽບຂ້າງລົດ,
    - 15.2 ຮອຍໂປກ ຫຼື ຮອຍບຸ້ມ ຢູ່ ມຸມແຈ, ໂຄງ ຫຼື ຂອບປະຕູ, ຂອບຢາງລົດ, ກັນຊົນ ແລະ ອື່ນໆ.
    - 15.3 ຮອຍບຸ້ມ ຫຼື ຮອຍຂູດ ຢູ່ ຕົວລົດ ເຊັ່ນ: ຮອຍຂູດທີ່ເກີດ ຈາກ ການໃຊ້ຜ້າເປື້ອນທໍາຄວາມສະອາດລົດ, ການຕໍາກັບວັດຖຸຂະໜາດນ້ອຍ ເຊັ່ນ: ຫີນ, ຝຸ່ນໄມ້ ແລະ ອື່ນໆ.
16. ຄວາມເສຍຫາຍໃດໜຶ່ງ ທີ່ເກີດຈາກສັດ ແມ່ນບໍ່ໄດ້ຮັບການຄຸ້ມກັນ (ເວັ້ນເສຍແຕ່ເກີດຈາກການຕໍາ).
17. ການປ່ຽນ ຫຼື ການສ້ອມແປງ ທີ່ປັບປຸງ ລົດປະກັນໄພ ໃຫ້ດີຂຶ້ນເກີນກວ່າ ສະພາບ ຂອງ ລົດ ໃນເວລາທີ່ອອກສັນຍາປະກັນໄພ ແມ່ນບໍ່ໄດ້ຮັບການຄຸ້ມກັນ;
18. ການເຄືອບແກ້ວ ກ່ອນ ຫຼື ພາຍຫຼັງການເຮັດສັນຍາປະກັນໄພ ແມ່ນຈະບໍ່ໄດ້ຮັບການຄຸ້ມກັນ.
19. ຄວາມເສຍຫາຍໃດໜຶ່ງ ເນື່ອງຈາກ ຄວາມລົ້ມເຫຼວຂອງ ລະບົບປະຕິບັດງານ ຫຼື ຊອັບແວຮ ຂອງ ພາຫະນະ ເຊັ່ນ: ຄວາມລົ້ມເຫຼວ, ການເປ່ເພ ຫຼື ຄວາມເສຍຫາຍທາງດ້ານກົນຈັກ, ໄຟຟ້າ, ອຸປະກອນ ຫຼື ລະບົບຄອມພິວເຕີ ຂອງ ລົດ; ຍົກເວັ້ນກໍລະນີທີ່ເກີດຈາກອຸປະຕິເຫດ.
20. ຄວາມເສຍຫາຍໃດໜຶ່ງ ເນື່ອງຈາກ ຄວາມລົ້ມເຫຼວຂອງ ລະບົບປະຕິບັດງານ ຫຼື ຊອັບແວຮ ຂອງ ພາຫະນະ, ການສູນເສຍ, ຄວາມເສຍຫາຍ, ຄ່າໃຊ້ຈ່າຍ ຫຼື ຄວາມຮັບຜິດຊອບໃດໆທີ່ເກີດຈາກເຫດການທາງໄຊເບີ້ ອິນເຕີເນັດ ເຊັ່ນ: ຄວາມລົ້ມເຫຼວ, ການເປ່ເພ ຫຼື ຄວາມເສຍຫາຍທາງດ້ານກົນຈັກ, ໄຟຟ້າ, ອຸປະກອນ ຫຼື ລະບົບຄອມພິວເຕີ ຂອງ ລົດ; ຍົກເວັ້ນກໍລະນີທີ່ເກີດຈາກອຸປະຕິເຫດ.

21. ຄວາມເສຍຫາຍທີ່ເກີດຈາກການປ່ຽນແປງອຸນຫະພູມຢ່າງກະທັນຫັນ ອັນເປັນຜົນມາຈາກ ຄວາມບໍ່ລະມັດລະວັງ ຫຼື ການເມີນເສີຍ ຂອງ ຜູ້ຂັບຂີ່ ແມ່ນບໍ່ໄດ້ຮັບການຄຸ້ມກັນ ຍົກເວັ້ນໃນກໍລະນີທີ່ເກີດຈາກອຸປະຕິເຫດ.
22. ຄ່າໃຊ້ຈ່າຍ ທີ່ເກີດຈາກ ການທຳຄວາມສະອາດ, ການຂ້າເຊື້ອ, ການຟື້ນຟູ, ການສ້ອມແປງ, ການຂັດຖູລົດໃຫ້ເງົາງາມ.
23. ໃນກໍລະນີທີ່ເກີດອຸປະຕິເຫດ ຖ້າຫາກວ່າຜູ້ໄດ້ຮັບການປະກັນໄພ ບໍ່ແຈ້ງອຸປະຕິເຫດຢ່າງຕົງຕໍ່ເວລາທີ່ໄດ້ກຳນົດ ຫຼື ການລວມເອົາຄ່າເສຍຫາຍຫຼາຍໆຢ່າງ ເພື່ອແຈ້ງບາດດຽວ, ບໍລິສັດປະກັນໄພ ຈະຮັບຜິດຊອບແຕ່ ຄວາມເສຍຫາຍໃໝ່ທີ່ເກີດຂຶ້ນເທົ່ານັ້ນ.
24. ໃນກໍລະນີມີການຂີ້ລັກງັດແງະ (ການລັກແມ່ນການກະທຳທີ່ຜິດກົດໝາຍ ເຊິ່ງການກະທຳດັ່ງກ່າວເປັນການເອົາຊັບສິນ ຂອງ ບຸກຄົນອື່ນ ໂດຍ ບໍ່ໄດ້ຮັບອະນຸຍາດຢ່າງສະໝັກໃຈ ຫຼື ເປັນການເອົາມາດ້ວຍການຂົ່ມຂູ່ ຫຼື ໃຊ້ຄວາມຮຸນແຮງ), ກໍລະນີດັ່ງຕໍ່ໄປນີ້ ຈະບໍ່ໄດ້ຮັບການຄຸ້ມກັນ:
    - 24.1 ສິ່ງປະກອບ, ເຄື່ອງມື ຫຼື ອາໄຫຼ່ ທີ່ເກັບຢູ່ພາຍນອກ ພາຫະນະ ເຊັ່ນ: ຢາງສຳຮອງ, ລໍ້ແມັກ, ຝາຄອບກະບະ, ກັນຊົນ...
    - 24.2 ຄວາມສູນເສຍ ທີ່ເກີດຈາກ ການປະກຸນແຈລົດໄວ້ ພາຍໃນ ຫຼື ໃນບໍລິເວນໂຕລົດ ໂດຍທີ່ບໍ່ມີຄົນເຝົ້າ ຫຼື ຄົນຢູ່ລົດ;
        - ➢ ການລັກຊັບທີ່ເກີດຈາກ ສະມາຊິກໃນຄອບຄົວ ຂອງ ຜູ້ໄດ້ຮັບການປະກັນໄພ ທີ່ອາໄສຢູ່ໃນ ຫຼັງຄາເຮືອນດຽວ ກັນກັບ ຜູ້ໄດ້ຮັບການປະກັນໄພ ຫຼື ທີ່ເກີດຈາກ ສະມາຊິກໃນຄອບຄົວທີ່ມີສ່ວນພົວພັນກັນ.
        - ➢ ຄວາມເສຍຫາຍ ຫຼື ການລັກຊັບ ທີ່ເກີດຈາກ ການງັດແງະ ຫຼື ການຍັກຍອກ ໂດຍບຸກຄົນໃດໜຶ່ງ ທີ່ໄດ້ຮັບມອບໝາຍໃຫ້ ນຳໃຊ້ ຫຼື ຄອບຄອງ ພາຫະນະ ຕາມ ສັນຍາເຊົ່າ, ສັນຍາເຊົ່າສິນເຊື່ອ, ສັນຍາເຊົ່າຊື້, ສັນຍາຊວດຈຳ; ຫຼື ໂດຍບຸກຄົນທີ່ລົງນາມໃນສັນຍາດັ່ງກ່າວ.
        - ➢ ການລັກຊັບໂດຍ ພະນັກງານ ຂອງ ຜູ້ໄດ້ຮັບການປະກັນໄພ ໃນລະຫວ່າງ ໂມງເຮັດວຽກ ຍົກເວັ້ນໃນກໍລະນີທີ່ ມີການຮ້ອງຟ້ອງ ຕໍ່ ພະນັກງານດັ່ງກ່າວໂດຍກົງ.
25. ຄວາມເສຍຫາຍ ຈາກ ອຸປະຕິເຫດທີ່ ຜູ້ປະກັນໄພ ພົບເຫັນວ່າ ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ພາຫະນະ ມີການປົກປິດ, ປອມແປງ, ບໍ່ເປີດເຜີຍຂໍ້ມູນ ຫຼື ເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງຕາມຄວາມເປັນຈິງ ກ່ຽວກັບ ອຸປະຕິເຫດ (ເຊັ່ນ: ສະຖານທີ່, ເວລາ, ບຸກຄົນທີ່ມີສ່ວນພົວພັນ ແລະ ອື່ນໆ), ປະຕິເສດການໃຫ້ຄວາມຮ່ວມມື ຕໍ່ ຕຳຫຼວດ ແລະ/ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ , ຫຼື ລົບໜີ ຈາກສະຖານທີ່ເກີດເຫດ ເພື່ອຫຼີກລ້ຽງ ຄວາມຮັບຜິດຊອບຕາມກົດໝາຍ ລວມເຖິງ ການກະທາທີ່ບໍ່ຈິງໃຈ ທີ່ ຜູ້ປະກັນໄພ ພົບເຫັນ ບໍ່ວ່າກ່ອນ, ໃນລະຫວ່າງ ຫຼື ພາຍຫຼັງທີ່ ຜູ້ປະກັນໄພໄດ້ຮັບເອົາໜັງສືຮຽກຮ້ອງສິນທົດແທນປະກັນໄພແລ້ວແມ່ນບໍ່ໄດ້ຮັບການຄຸ້ມກັນ.
26. ຄວາມເສຍຫາຍທີ່ເກີດຈາກ ການສືບຕໍ່ຂັບຂີ່ລົດປະກັນໄພ ພາຍຫຼັງເກີດອຸປະຕິເຫດ ເຊິ່ງ ຜູ້ໄດ້ຮັບການປະກັນໄພ ຄວນຢຸດນຳໃຊ້ລົດ ເພື່ອສ້ອມແປງ ຫຼື ຕິດຕໍ່ ບໍລິສັດປະກັນໄພ ເພື່ອຂໍຄວາມຊ່ວຍເຫຼືອ ຈາກ ພະນັກງານປະກັນໄພ. ຄວາມເສຍຫາຍ ບາງຄັ້ງ ແມ່ນເກີດຈາກ ການປະລົດປະກັນໄພ ຢູ່ສະຖານທີ່ ທີ່ບໍ່ມີຄວາມປອດໄພ ເຮັດໃຫ້ ມີຄວາມເສຍຫາຍ ເພີ່ມຂຶ້ນ ຫຼື ມີຄວາມເສຍຫາຍໃໝ່ເກີດຂຶ້ນ ແມ່ນບໍ່ໄດ້ຮັບການຄຸ້ມກັນ.
27. ຄວາມເສຍຫາຍທີ່ເກີດ ຈາກ ການເມີນເສີຍທີ່ບໍ່ສາມາດຍອມຮັບໄດ້ ເຊັ່ນ: ການຂັບຂີ່ລົດສວນເລນ, ການຂັບຂີ່ລົດຍ້ອນສອນ, ການຂັບຂີ່ລົດຜ່ານຈຸດທີ່ມີສິ່ງກີດຂວາງ, ທາງລັດ, ທາງທີ່ຢູ່ໃນສະພາບບໍ່ສາມາດຂັບຂີ່ຜ່ານໄດ້ ໂດຍທີ່ ຜູ້ໄດ້ຮັບການ ປະກັນໄພ ຫຼື ຜູ້ຂັບຂີ່ ກໍຮັບຮູ້ເຖິງຄວາມສ່ຽງທີ່ຈະເກີດຂຶ້ນແມ່ນບໍ່ໄດ້ຮັບການຄຸ້ມກັນ.
28. ຄວາມເສຍຫາຍທາງດ້ານຊັບສິນທີ່ເກີດຈາກການສັ່ນ ຫຼື ນໍ້າໜັກ ຂອງ ລົດ ຫຼື ສິ່ງຂອງທີ່ບັນທຸກ ເຊັ່ນ: ຂົວຊັ່ງນໍ້າໜັກ, ຂົວ, ຂົວທາງລົດໄຟ, ຖະໜົນ, ທາງຄົນຍ່າງ ຫຼື ສິ່ງທີ່ຢູ່ກ້ອງສິ່ງດັ່ງກ່າວ.
29. ຄວາມເສຍຫາຍໃດໜຶ່ງ ຕໍ່ ສາຍໄຟຕ່າງໆ ເຊັ່ນ: ສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ ຫຼື ສິ່ງທີ່ຢູ່ເທິງ ສິ່ງດັ່ງ ກ່າວ ທີ່ເກີດຈາກ ຄວາມສູງ ຂອງ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ (ມາດຕາ 34, ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 188, ລົງວັນທີ 03 ກໍລະກົດ 2007).
30. ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ ສິນຄ້າ ແລະ ວັດຖຸສິ່ງຂອງ ທີ່ຂົນສົ່ງໂດຍ ລົດປະກັນໄພ ລວມເຖິງ ຄວາມເສຍຫາຍ ທີ່ເກີດຈາກ ສິນຄ້າ ແລະ/ຫຼື ວັດຖຸສິ່ງຂອງດັ່ງກ່າວເອງ ຕໍ່ ບຸກຄົນ ຫຼື ຊັບສິນ ຂອງ ຜູ້ອື່ນ.
31. ຄວາມເສຍຫາຍທີ່ເກີດຈາກ ການນຳໃຊ້ ພາຫະນະທີ່ມີປະກັນໄພ ເຂົ້າໃນວຽກງານກໍ່ສ້າງ ຫຼື ການຜະລິດ.
32. ຄວາມເສຍຫາຍທີ່ເກີດຈາກ ການກໍ່ການຮ້າຍ.
33. ການສ້ອມແປງເບື້ອງຕົ້ນ ຢູ່ ສະຖານທີ່ເກີດອຸປະຕິເຫດ, ຄ່າໃຊ້ຈ່າຍໃນການລາກ, ອູ່ສ້ອມແປງ, ຄ່າໃຊ້ຈ່າຍໃນການ ເຄື່ອນຍ້າຍ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ ໄປໄວ້ ອູ່ສ້ອມແປງລົດທີ່ໃກ້ທີ່ສຸດ ເຊິ່ງໃນຄວາມເປັນຈິງແລ້ວ ຄ່າໃຊ້ຈ່າຍດັ່ງ ກ່າວ ແມ່ນ ຜູ້ໄດ້ຮັບການປະກັນໄພ ເປັນຜູ້ຮັບຜິດຊອບ (ເຖິງຢ່າງໃດກໍ່ຕາມ ໃນກໍລະນີ ມີອຸປະຕິເຫດເກີດຂຶ້ນ, ບໍລິສັດ ປະກັນໄພ ຈະທົດແທນເງິນຄືນສຳລັບ ຄ່າໃຊ້ຈ່າຍທີ່ກ່າວມາຂ້າງເທິງ ໃນຈຳນວນ 20% ຂອງ ຄ່າໃຊ້ຈ່າຍໃນການສ້ອມແປງທັງໝົດ ໂດຍບໍ່ເກີນ 5,000,000 ກີບ) ເຊິ່ງສິນທົດແທນປະກັນໄພດັ່ງກ່າວ ແມ່ນລວມຢູ່ໃນ ວົງເງິນປະກັນໄພທັງໝົດ ຂອງ ການປະກັນໄພຄວາມເສຍຫາຍ TPL (ການຄຸ້ມກັນ ຂໍ້ ກ ຂ).
34. ຄວາມຮັບຜິດຊອບໃດໜຶ່ງ ແລະ ຫຼື ການຕົກລົງໃດໆທີ່ບໍ່ໄດ້ຮັບການເຫັນດີຈາກ ຜູ້ປະກັນໄພ ກ່ອນ.
35. ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ກ່ຽວຂອງໃນສັນຍານີ້ມີພັນທະໃນການສະໜອງຂໍ້ມູນຢ່າງຄົບຖວນແລະຖືກຕ້ອງໃຫ້ກັບ ຜູ້ປະກັນໄພ ແລະ ເຫັນດີໃຫ້ ຜູ້ປະກັນໄພ ເຂົ້າເຖິງ, ເກັບກຳ, ຮຽກເອົາ, ນຳໃຊ້ຂໍ້ມູນຈາກຜູ້ກ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## IV. ການຄຸ້ມຄອງຂໍ້ມູນ

ຜູ້ປະກັນໄພ ໄດ້ຮັບ ແລະ ປະເມີນ ຂໍ້ມູນສ່ວນຕົວ ຂອງ ລູກຄ້າ ເພື່ອຈຸດປະສົງໃນການກະກຽມ ໃບສະເໜີລາຄາ, ສັນຍາປະກັນໄພ, ການເກັບຄ່າທຳນຽມປະກັນໄພ, ການຈ່າຍສິນທົດແທນປະກັນໄພ ແລະ ເພື່ອຈຸດປະສົງອື່ນໆທີ່ກ່ຽວຂ້ອງໂດຍກົງກັບການຄຸ້ມຄອງບໍລິຫານການປະກັນໄພ ຕາມ ສັນຍາປະກັນໄພ. ການຮັກສາຂໍ້ມູນ ຂອງ ຜູ້ໄດ້ຮັບການປະກັນໄພ ໄວ້ເປັນຄວາມລັບແມ່ນວຽກງານທີ່ເປັນບຸລິມະສິດອັນດັບຕົ້ນໆ ຂອງ ຜູ້ປະກັນໄພ. ຜູ້ໄດ້ຮັບການປະກັນໄພ ມີສິດເຂົ້າເຖິງຂໍ້ມູນສ່ວນຕົວ ຂອງ ຕົນໄດ້ ແລະ ມີສິດຂໍໃຫ້ ຜູ້ປະກັນໄພ ແກ້ໄຂ ຫຼື ລຶບ ຂໍ້ມູນໃດໜຶ່ງທີ່ ຜູ້ໄດ້ຮັບການປະກັນໄພ ເຫັນວ່າ ບໍ່ຖືກຕ້ອງ ຫຼື ເປັນຂໍ້ມູນເກົ່າ. ຜູ້ປະກັນໄພ ຈະບໍ່ເກັບຂໍ້ມູນ ຂອງ ຜູ້ໄດ້ຮັບການປະກັນໄພ ໄວ້ເກີນກວ່າຄວາມຈຳເປັນ ສຳລັບ ຈຸດປະສົງທີ່ກ່າວມາຂ້າງເທິງນັ້ນ.

ເຖິງຢ່າງໃດກໍ່ຕາມ, ຜູ້ປະກັນໄພ ມີສິດເປີດເຜີຍຂໍ້ມູນສ່ວນຕົວ ຂອງ ທ່ານ ໃຫ້ແກ່ ພາກສ່ວນອື່ນ ທີ່ມີສ່ວນພົວພັນທາງດ້ານທຸລະກິດ ກັບ ຜູ້ປະກັນໄພ ເພື່ອຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນ ວັກຂ້າງເທິງນີ້ ຫຼື ເພື່ອເຮັດໃຫ້ ພາກສ່ວນດັ່ງກ່າວ ສາມາດສະເໜີຜະລິດຕະພັນ ແລະ ການບໍລິການໃຫ້ແກ່ທ່ານ. ພາກສ່ວນດັ່ງກ່າວ ປະກອບດ້ວຍ ບໍລິສັດປະກັນໄພ, ຕົວແທນ ນາຍໜ້າປະກັນໄພ, ບໍລິສັດປະກັນໄພຕໍ່, ໜ່ວຍງານແນະນຳປະກັນໄພ, ບໍລິສັດໃນເຄືອ, ທີ່ປຶກສາ, ບຸກຄົນທີ່ມີສ່ວນພົວພັນກັບການຮຽກຮ້ອງສິນທົດແທນປະກັນໄພ, ບໍລິສັດພາຍນອກທີ່ເກັບກຳ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງ ຂໍ້ມູນການຮຽກຮ້ອງສິນທົດແທນປະກັນໄພ, ພາກສ່ວນທີ່ ຜູ້ປະກັນໄພ ມີໂຄງການປະກັນໄພ ຮ່ວມນຳ ເຊິ່ງທ່ານຊື້ປະກັນໄພ ພາຍໃຕ້ ໂຄງການດັ່ງກ່າວ (ເຊັ່ນ: ຜູ້ສະໜອງທຶນ ຫຼື ຜູ້ຜະລິດ ແລະ/ຫຼື ຜູ້ຂາຍລົດ). ນອກຈາກນັ້ນ, ຜູ້ປະກັນໄພ ມີສິດເປີດເຜີຍຂໍ້ມູນ ຕໍ່ ລັດຖະບານ, ເຈົ້າໜ້າທີ່ບັງຄັບກົດໝາຍ, ອົງການແກ້ໄຂຂໍ້ຂັດແຍ່ງ, ອົງການຄຸ້ມຄອງ ຫຼື ຕາມກົດໝາຍ.

ຜູ້ປະກັນໄພ ຈະບັນທຶກສຽງ ສຳລັບ ສາຍໂທເຂົ້າ ແລະ/ຫຼື ໂທອອກ ເພື່ອຈຸດປະສົງໃນການຝຶກອົບຮົມ ຫຼື ຢັ້ງຢືນຄວາມຖືກຕ້ອງ. ໃນກໍລະນີທີ່ ບັນທຶກສຽງ, ຜູ້ປະກັນໄພ ສາມາດສະໜອງສຳເນົາໃຫ້ທ່ານ ຕາມການສະເໜີ ຖ້າຫາກມີເຫດຜົນພຽງພໍ.

ໂດຍການສະໜອງຂໍ້ມູນສ່ວນຕົວໃຫ້ ພວກເຮົາ, ທ່ານ ແລະ ບຸກຄົນອື່ນໃດໜຶ່ງ ທີ່ທ່ານສະໜອງຂໍ້ມູນສ່ວນຕົວໃຫ້ ອະນຸຍາດໃຫ້ ພວກເຮົາ ນຳໃຊ້ ແລະ ເປີດເຜີຍຂໍ້ມູນດັ່ງກ່າວ ຈົນກວ່າ ທ່ານຈະແຈ້ງເປັນຢ່າງອື່ນ. ຖ້າທ່ານຕ້ອງການຍົກເລີກການອະນຸຍາດ ລວມເຖິງ ການຍົກເລີກການຮັບຂໍ້ມູນ ກ່ຽວກັບ ຜະລິດຕະພັນ ແລະ ຂໍສະເໜີຕ່າງໆ ຈາກ ພວກເຮົາ ຫຼື ບໍລິສັດທີ່ພວກເຮົາສາຍພົວພັນ ແມ່ນໃຫ້ແຈ້ງພວກເຮົາ.

## V. ການແຈ້ງອຸປະຕິເຫດ:

ໃນກໍລະນີທີ່ເກີດອຸປະຕິເຫດ, ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ ຕ້ອງຕິດຕໍ່ ຜູ້ປະກັນໄພ ທັນທີ ທີ່ເບີ: **1456; (021) 222 222 ຫຼື 020 5524 4222** ເຊິ່ງຕ້ອງແຈ້ງໃຫ້ ຜູ້ປະກັນໄພ ຮັບຊາບທັນທີ.